Diploma Programme
Programme du diplôme
Programa del Diploma

# Lao A: literature – Higher level – Paper 1
# Lao A : littérature – Niveau supérieur – Épreuve 1
# Laosiano A: literatura – Nivel superior – Prueba 1

Wednesday 4 May 2016 (afternoon)
Mercredi 4 mai 2016 (après-midi)
Miércoles 4 de mayo de 2016 (tarde)

2 hours / 2 heures / 2 horas

---

### Instructions to candidates

- Do not open this examination paper until instructed to do so.
- Write a literary commentary on one passage only.
- The maximum mark for this examination paper is **[20 marks]**.

### Instructions destinées aux candidats

- N’ouvrez pas cette épreuve avant d’y être autorisé(e).
- Rédigez un commentaire littéraire sur un seul des passages.
- Le nombre maximum de points pour cette épreuve d’examen est de **[20 points]**.

### Instrucciones para los alumnos

- No abra esta prueba hasta que se lo autoricen.
- Escriba un comentario literario sobre un solo pasaje.
- La puntuación máxima para esta prueba de examen es **[20 puntos]**.

2216 – 0581

3 pages/páginas

© International Baccalaureate Organization 2016

ໃຫ້ເຈົ້າວິຈານໃນແງ່ວັນນະຄະດີຫ**ນຶ່ງເລື່ອງ**ທີ່ເຈົ້າເລືອກຈາກສອງເລື່ອງຕໍ່ໄປນີ້

**1.**

ບັດນີ້ຈະກ່າວເຖິງນາຍກວຽນຜູ້ໜຶ່ງ ແຕ່ລະມື້ລາວຂີ່ກວຽນມາເຂົ້າປ່າຫາຕັດຟືນມາຂາຍ ວັນໜຶ່ງ ລາວເຂົ້າປ່າຫາຟືນ ກໍເລີຍພໍ້ໜອງໃຫຍ່ທີ່ແຫ້ງຂອດ ລາວເຫັນແຂ້ໜຶ່ງໂຕໃຫຍ່ນອນກິ້ງເກືອກ ດີ້ນດັ່ນໃນໜອງແຫ້ງແລ້ງນັ້ນ ມັນອ້າປາກດ້ວຍຄວາມຫິວໂຫຍ ນາຍກວຽນກໍຖາມແຂ້ໂຕນັ້ນວ່າ ເປັນຫຍັງມຶງຈິ່ງບໍ່ໜີໄປຢູ່ໃນໜອງອື່ນບ່ອນມີນໍ້າມີປາພຸ້ນ ແຂ້ຕອບວ່າ ຂ້ອຍກໍຢາກໄປ ເຕມທີ່ແຕ່ໄປບໍ່ໄດ້ ນາຍກວຽນຖາມຕື່ມວ່າ ຄັນກູເອົາມຶງໄປບ່ອນອື່ນທີ່ມີນໍ້າ ມີປາຫຼາຍພຸ້ນ ມຶງຈະຍິນດີໄປນໍາກູບໍ່ ແຂ້ກໍຕອບວ່າ ຂ້ອຍຈະບໍ່ລືມບຸນຄຸນເຈົ້າດອກ ເມື່ອ ແຂ້ຍິນດີຕົກລົງແນວນັ້ນ ນາຍກວຽນກໍເອົາເຊືອກມັດແຂ້ຂຶດເຂົ້າແລ້ວດຶ່ງຂື້ນໃສ່ກວຽນ ຈາກນັ້ນນາຍກວຽນຟ້າວໄປໜອງແຫ່ງໃໝ່ ພໍໄປຮອດແຄມໜອງໃຫຍ່ທີ່ມີນໍ້າໃສເຢັນ ນາຍກວຽນເອົາແຂ້ລົງປ່ອຍ ພໍໄດ້ຖືກນໍ້າໃໝ່ທີ່ໃສເຢັນແຂ້ກໍຄຶດຖ່ອຍຮ້າຍ ແລ້ວໂດດ ຄາບຂາງົວຂອງນາຍກວຽນໄວ້ເພື່ອຈະກິນງົວພ້ອມທັງນາຍກວຽນເປັນອາຫານ ນາຍ ກວຽນຈິ່ງເວົ້າຕໍ່ແຂ້ວ່າ ຖ້າມຶງຈະກິນກູ ກູກໍບໍ່ວ່າຫຍັງ ແຕ່ຂໍໃຫ້ມີຜູ້ຕັດສິນເສຍກ່ອນ ແລ້ວທັງສອງຈິ່ງພາກັນໄປ ພໍໄປພົບງູໃຫຍ່ໂຕໜຶ່ງ ທັງສອງກໍເລົ່າເລື່ອງລາວໃຫ້ງູໃຫຍ່ຟັງ ງູກໍຄຶດຢູ່ໃນໃຈວ່າ ກູຫາກເປັນເຊື້ອຊາດດຽວກັນກັບແຂ້ ກູຄວນຕັດສິນໃຫ້ແຂ້ເປັນຜູ້ຊະນະ ແລ້ວງູຕັດສິນໃຫ້ແຂ້ກິນນາຍກວຽນ ນາຍກວຽນບໍ່ຍອມຈິ່ງເດີນທາງຕໍ່ໄປເລີຍໄປພໍ້ເຕົ່າໂຕໜຶ່ງ ເຕົ່າກໍຕັດສິນໃຫ້ແຂ້ກິນນາຍກວຽນຍ້ອນອາໄສຫາກິນຢູ່ໃນນໍ້າ ເກງວ່າແຂ້ຈະທໍາລາຍຕົນ ນາຍກວຽນບໍ່ຍອມຈິ່ງພາກັນເດີນທາງຕໍ່ໄປ ກໍເລີຍພໍ່ງົວໂຕໃຫຍ່ ງົວໃຫຍ່ຄຶດໝ່າຍຊັງຄົນທີ່ໄດ້ ຫາລຸນຝູງງົວເອົາໄປແກ່ກວຽນແກ່ໄຖ ຈິ່ງຕັດສິນໃຫ້ແຂ້ກິນນາຍກວຽນ ນາຍກວຽນບໍ່ພໍໃຈຈິ່ງ ເດີນທາງຕໍ່ໄປເລີຍພໍ້ທ້າວສີວິໄຊແລ້ວທັງສອງເລົ່າເລື່ອງທຸກປະການ ທ້າວສີວິໄຊຖາມແຂ້ວ່າ ແຕ່ກ່ອນເຈົ້າເນົາຢູ່ໃສ ແຂ້ຕອບວ່າຂ້ອຍຫາກເນົາຢູ່ໜອງໃຫຍ່ວັງເລິກພຸ້ນແລ້ວ ມີປູປາອາຫານ ມາກມາຍຫຼາຍລົ້ນ ຈາກນັ້ນທ້າວສີວິໄຊກໍບອກໃຫ້ນາຍກວຽນເອົາເຊືອກມາມັດແຂ້ຄືນຄືເກົ່າເພື່ອ ຈະນໍາປະໄວ້ໜອງເກົ່າທີ່ມັນເຄີຍຢູ່ ນາຍກວຽນກໍເອົາເຊືອກມັດແຂ້ຂຶດເຂົ້າ ທ້າວສີວິໄຊຖາມ ແຂ້ວ່າແຕ່ຄາວກ່ອນນາຍກວຽນມັດເຈົ້າແໜ້ນເທົ່ານີ້ບໍ່ ແຂ້ຕອບວ່າ ນາຍກວຽນມັດຂ້ອຍແໜ້ນ ກວ່ານີ້ຫຼາຍເທົ່າ ທ້າວສີວິໄຊຈິ່ງບອກນາຍກວຽນໃຫ້ມັດແໜ້ນເຂົ້າເລື້ອຍໆ ຈົນວ່າແຂ້ຕາເຫຼືອກ ຕາຊຶ້ນຂື້ນ ພໍໄປຮອດໜອງເກົ່າທີ່ແຂ້ເຄີຍຢູ່ທ້າວສີວິໄຊຫຼຽວເບິ່ງຮອບໆໜອງກໍບໍ່ເຫັນນໍ້າພໍຢອດ ນາຍກວຽນກໍລາກແຂ້ລົງຈາກກວຽນທັນທີ ທ້າວສີວິໄຊຮູ້ວ່າແຂ້ເປັນຜູ້ອະກະຕັນຍູ ທ້າວຈິ່ງ ບອກແຂ້ວ່າ ແຕ່ນີ້ຕໍ່ໄປມຶງຈົ່ງຢູ່ໃນໜອງເກົ່າແຫ່ງນີ້

ບໍ່ປາກົດຊື່ຜູ້ແຕ່ງ *ທ້າວສີວິໄຊ* (ບໍ່ປາກົດປີແຕ່ງ)

**2.**

ພໍຂູນເທືອງໄປເຖິງອຸດທະຍານສວນດອກ
ກໍກຫາກມີໝູ່ໄມ້ ໃນທົ່ມທື່ມຫອມ
ຢູ່ລ້ອມອ້ອມທີ່ອຸດທະຍານ
ເປັນສະຖານນາຄີທີ່ມາຊົມໄມ້
ເປັນຂອງໄທ້ນາງ ທິດາລູກນາກ
ນາງນາກກໍຜັນໂຜນຜ່າຍ ກາຍມາຮີບດ່ອນ
ເຖິງສາລາລ່ວງຂຶ້ນບົນບ້ານບໍ່ນານ
ພໍແຕ່ຂຶ້ນຮອດບ້ານ ເລີຍແລຫຼໍ່າເຫັນ
ຂູນເທືອງເທີທ່ານມອງເມີນຍ້ຽມ
ນາງໄດ້ເຫັນດັ່ງນັ້ນ ເລີຍຟ້າວກ່າວຈາ
ດູລາເຈົ້າ ຈອມໝໍ່ແນວຄົນ
ທ່ານຫາກມີການຫຍັງ ຈັ່ງມາເນົານີ້
ຫຼືວ່າ ມີການໃຊ້ແນວໃດໂດຍດ່ອນ
ຢູ່ປະເທດໃດແດນດ້າວທີ່ໃດມາ
ສັງເລົ່າມາເຮືອນງູເງືອກແນວນາມກ້າ
ຈັກມາຕາຍຄ້າງ ກາງເຮືອນບໍ່ສົງເສັຍແລ້ວ
ເຮົາຈັກກິນທ່ານໄທ້ ດຽວນີ້ດ່ອນພະລັນແທ້ແລ້ວ
ບໍ່ຢ່າງນັ້ນ ໃຫ້ເຈົ້າຮີບດ່ອນໜີ
ເຮົາຈັກກິນທ່ານແທ້ ບໍ່ທັນສັ່ງໄຜ ແທ້ແລ້ວ
ແຕ່ນັ້ນຂູນເທືອງທ້າວ ທັນທີຂານຕອບ
ບໍ່ມີທາງໂລບລ້ຽວເລັ້ນຫຼ່າຍພາງ
ການທີ່ພີ່ທ່ຽວທາງດັ້ນ ສັນຈອນເຈັຍລະຈາກມານີ້
ເພົາະຄະນຶງຮອດນ້ອງຈັ່ງມາ
ພີ່ໄດ້ຍິນຂ່າວວ່າເຈົ້າເປັນນາງນາກງູ
ດູເງົາງາມກວ່າເທວະດາດ້າວ
ພີ່ບໍ່ໄດ້ປອງຫາຕົ້ມ ບໍ່ຫວັງພາງໃຫ້ຕົກຫຼົ່ມ
ພີ່ບໍ່ມາລໍ້ໃຫ້ນາງລົ້ມໃສ່ໜາມດອກນາ
ຮັກປານໃດພີ່ກໍໝັ່ນໝານສົນພີ່ກໍຝ່າ
ປ່າຂີ້ອົ້ນຕັນໜ້າພີ່ກໍຖາງ
ພີ່ບໍ່ຫວາງນາງໄວ້ໜີໄປເປັນໃຫມ່
ຄັນບໍ່ໄດ້ມື້ນີ້ ຕົນອ້າຍແມ່ນບໍ່ໜີນ້ອງເອີຍ

ບໍ່ປາກົດຊື່ຜູ້ແຕ່ງ *ນິທານຂູນທຶງຂູນເທືອງ* (ບໍ່ປາກົດປີແຕ່ງ)